**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ

ເລກທີ.....785...../ຂບຊ

ບໍລິຄໍາໄຊ,ວັນທີ.....31 OCT 2018.....

# ຂໍ້ຕົກລົງ

## ຂອງເຈົ້າແຂວງ ບໍລິຄໍາໄຊ

## ວ່າດ້ວຍລະບຽບການຄຸ້ມຄອງເຂດຊົດເຊີຍຊີວະນາໆພັນ ນໍ້າຈອນ-ນໍ້າຊັ່ງ ຂອງໂຄງການເຂື່ອນໄຟຟ້ານໍ້າງຽບ 1

- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ດໍາລັດວ່າດ້ວຍປ່າປ້ອງກັນ ສະບັບເລກທີ່ 333/ ນຍ, ລົງວັນທີ່ 19 ກໍລະກົດ 2010;
- ອີງຕາມ ສັນຍາສໍາປະທານລະຫວ່າງລັດຖະບານແຫ່ງ ສ ປ ປລາວ ກັບບໍລິສັດໄຟຟ້ານໍ້າງຽບ 1 ສະບັບລົງວັນທີ 27 ສິງຫາ 2013;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 887/ຂບຊ, ລົງວັນທີ 16 ທັນວາ 2015 ວ່າດ້ວຍການຮັບຮອງເອົາພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນປ່າປ້ອງກັນແຫ່ງຊາດນໍ້າມ່ອນ-ນໍ້າຍ້ອງ (ເຂດຍອດນໍ້າຈອນ-ນໍ້າຊັ່ງ) ເປັນເຂດຊົດເຊີຍຊີວະນາໆພັນ ຂອງໂຄງການເຂື່ອນໄຟຟ້ານໍ້າງຽບ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາປະຊາຊົນແຂວງບໍລິຄໍາໄຊ ເລກທີ 081/ສພຂ, ລົງ ວັນທີ 21 ກັນຍາ 2018.

## ເຈົ້າແຂວງບໍລິຄໍາໄຊ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບລະບຽບການຄຸ້ມຄອງເຂດຊົດເຊີຍຊີວະນາໆພັນນໍ້າຈອນ-ນໍ້າຊັ່ງ ຂອງໂຄງການເຂື່ອນໄຟຟ້ານໍ້າງຽບ 1 ເພື່ອປົກປັກຮັກສາ, ພັດທະນາ, ນໍາໃຊ້ ແລະ ກວດກາຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້ ແລະ ແຫຼ່ງນໍ້າໃນເຂດຊົດເຊີຍຊີວະນາໆພັນນໍ້າຈອນ-ນໍ້າຊັ່ງ

ໃຫ້ມີຄວາມຍືນຍົງ, ແນໃສ່ເຮັດໃຫ້ທຳມະຊາດມີຄວາມສົມດຸນ, ເຮັດໃຫ້ປ່າໄມ້, ແຫຼ່ງນ້ຳ ແລະ ທີ່ດິນປ່າໄມ້ເປັນແຫຼ່ງທຳມາຫາກິນ ແລະ ນຳໃຊ້ຂອງປະຊາຊົນໂດຍບໍ່ບົກແຫ້ງ, ກາຍເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ, ເປັນບ່ອນສຶກສາຄົ້ນຄວ້າທົດລອງ ທາງດ້ານຊີວະວິທະຍາ; ຮັບປະກັນການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມອຸດົມສົມບູນ, ມີຄວາມຫຼາກຫຼາຍທາງດ້ານຊີວະນາງພັນ, ຮັກສາຄວາມສົມດຸນທາງດ້ານລະບົບນິເວດວິທະຍາ, ການສືບພັນທາງດ້ານຊີວະວິທະຍາຕາມທຳມະຊາດຂອງສັດນ້ຳ ແລະ ສັດປ່າ ໃຫ້ມີການຂະຫຍາຍຕົວ, ທັງເປັນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ 6 ບ້ານເປົ້າໝາຍໃຫ້ດີຂຶ້ນ ແລະ ເປັນການປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ຂະຫຍາຍຕົວຂຶ້ນເລື້ອຍໆ.

**ມາດຕາ 2: ລະບຽບການຄຸ້ມຄອງເຂດຊົດເຊີຍຊີວະນາງພັນນ້ຳຈອນ-ນ້ຳຊົ່ງ**

ລະບຽບການຄຸ້ມຄອງເຂດຊົດເຊີຍຊີວະນາງພັນນ້ຳຈອນ-ນ້ຳຊົ່ງ ຂອງໂຄງການເຂື່ອນໄຟຟ້ານ້ຳງຽບ 1 ແມ່ນການກຳນົດຫຼັກການ ແລະ ວິທີການອັນລະອຽດເພື່ອຄຸ້ມຄອງ, ພັດທະນາເຂດພື້ນທີ່ປ່າປ້ອງກັນແຫ່ງຊາດ ແລະ ຊີວະນາງພັນຢູ່ເຂດນ້ຳມ່ອນ-ນ້ຳຍ້ອງ ທີ່ໄດ້ກຳນົດເອົາເຂດນ້ຳຈອນ-ນ້ຳຊົ່ງ ເປັນເຂດຊົດເຊີຍຊີວະນາງພັນທີ່ຖືກຜົນກະທົບ ແລະ ສູນເສຍຈາກການກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ 1.

**ມາດຕາ 3: ການອະທິບາຍຄຳສັບ**

ບັນດາຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ການຊົດເຊີຍ:** ໝາຍເຖິງການທົດແທນສິ່ງທີ່ສູນເສຍຈາກການພັດທະນາ ຊຶ່ງຕ້ອງມີຄຸນຄ່າເທົ່າເດີມ ຫຼື ຫຼາຍກວ່າ ຈາກສິ່ງທີ່ສູນເສຍໄປ;
2. **ເຂດຊົດເຊີຍ:** ໝາຍເຖິງເຂດປ່າໄມ້, ທີ່ດິນປ່າໄມ້ທີ່ໄດ້ຮັບການອະນຸມັດສ້າງຕັ້ງໃຫ້ເປັນເຂດຊົດເຊີຍຊີວະນາງພັນຈາກລັດຖະບານ ແລະ ຖືກຈັດແບ່ງເພື່ອທົດແທນສິ່ງທີ່ສູນເສຍຈາກການພັດທະນາ;
3. **ເຂດປ່າຍອດນ້ຳ:** ໝາຍເຖິງເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ຊຶ່ງເປັນເຂດຕົ້ນກຳເນີດຂອງສາຍນ້ຳທີ່ນອນຢູ່ໃນເຂດພື້ນທີ່ການຊົດເຊີຍຊີວະນາງພັນ;
4. **ການຄຸ້ມຄອງ:** ໝາຍເຖິງການດຳເນີນກິດຈະກຳ, ການບໍລິຫານຢ່າງມີແຜນການລະອຽດກ່ຽວກັບຊັບພະຍາກອນທຳມະຊາດເຊັ່ນ: ການສຳຫຼວດ, ການຕິດຕາມກວດກາ, ການວາງແຜນຈັດສັນ, ການຄົ້ນຄວ້າທົດລອງ, ການສຶກສາ ແລະ ການທ່ອງທ່ຽວ;
5. **ການອະນຸລັກ:** ໝາຍເຖິງການນຳໃຊ້ຢ່າງຊານສະຫຼາດ ໂດຍມີການຄຸ້ມຄອງຈັດສັນຕາມລະບຽບຫຼັກການເພື່ອໃຫ້ມີການນຳໃຊ້ແບບຍືນຍົງ;
6. **ການປົກປັກຮັກສາ:** ໝາຍເຖິງການດຳເນີນກິດຈະກຳຕ່າງໆກ່ຽວກັບການຮັກສາຊັບພະຍາກອນທຳມະຊາດເຊັ່ນ: ຮັກສາຄວາມຫຼາກຫຼາຍດ້ານຊີວະນາງພັນ ເພື່ອສຶກສາຄົ້ນຄວ້າ ແລະ ປະໂຫຍດດ້ານອື່ນໆ, ຮັກສາປ່າໄມ້ເພື່ອຮັກສາແຫຼ່ງນ້ຳ ແລະ ສັດປ່າປະເພດຕ່າງໆ;
7. **ການສະຫງວນ:** ໝາຍເຖິງການຫວງຫ້າມບໍ່ໃຫ້ນຳໃຊ້ຢ່າງເດັດຂາດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງຂອງລັດຖະບານ;
8. **ການພັດທະນາ:** ໝາຍເຖິງການດຳເນີນກິດຈະກຳທີ່ກະທົບໃສ່ການປູກໄມ້,ການຟື້ນຟູປ່າໄມ້ໃນທີ່ດິນປ່າໄມ້ຊຸດໂຊມ ແລະການປັບປຸງເນື້ອທີ່ດິນຄືນ;

9. **ເຄື່ອງປ່າຂອງດົງ**: ໝາຍເຖິງພືນພະລັດຈາກປ່າຊຶ່ງອາດຈະເປັນຕົ້ນ, ລຳ, ກົ່ງ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ໝາກ, ດອກ, ຢາງ, ເປືອກ ແລະ ອື່ນໆ;

10. **ປ່າໄມ້**: ໝາຍເຖິງຊັບພະຍາກອນທຳມະຊາດອັນລ້ຳຄ່າທີ່ມີລະບົບນິເວດສະເພາະຊຶ່ງປະກອບດ້ວຍ ຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນປ່າໄມ້, ຕົ້ນໄມ້ນາໆຊະນິດທີ່ເກີດຂຶ້ນຕາມທຳມະຊາດ ຫຼື ຖືກປູກ ຂຶ້ນໃນພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;

11. **ລະບົບນິເວດ**: ໝາຍເຖິງການພົວພັນຊຶ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດຢູ່ໃນສິ່ງແວດ ລ້ອມທຳມະຊາດສະເພາະຂອງມັນຢ່າງເປັນວົງຈອນຕໍ່ເນື່ອງ;

12. **ຊີວະນາໆພັນ**: ໝາຍເຖິງຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນເຂດທຳມະຊາດໃດໜຶ່ງ;

13. **ລະບົບສາຍນ້ຳ**: ໝາຍເຖິງສາຍນ້ຳຫຼັກ, ສາຂາ, ຫ້ວຍນ້ຳ ທີ່ນອນໃນເຂດຊຸດເຊີຍຊີວະນາໆພັນນ້ຳ ຈອນ-ນ້ຳຊັ້ງ;

14. **ລະບົບນິເວດຕາມສາຍນ້ຳ**: ໝາຍເຖິງການພົວພັນຊຶ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດຢູ່ ໃນສິ່ງແວດລ້ອມທຳມະຊາດຕາມສາຍນ້ຳ, ສາຂາ, ຫ້ວຍນ້ຳ ສະເພາະຂອງມັນຢ່າງເປັນວົງຈອນຕໍ່ ເນື່ອງ;

15. **ສັດນ້ຳ ແລະ ສັດປ່າປະເພດຫວງຫ້າມ**: ໝາຍເຖິງສັດນ້ຳ ແລະ ສັດປ່າທີ່ໄດ້ກຳນົດໄວ້ໃນບັນຊີ 1 ຊຶ່ງ ເປັນສັດທີ່ຫາຍາກ ແລະ ໃກ້ຈະສູນພັນ;

16. **ສັດນ້ຳ ແລະສັດປ່າປະເພດຄຸ້ມຄອງ**: ໝາຍເຖິງສັດນ້ຳ ແລະ ສັດປ່າທີ່ໄດ້ກຳນົດໄວ້ໃນບັນຊີ 2 ຊຶ່ງ ຈຳເປັນຕ້ອງມີການຄຸ້ມຄອງ, ຖ້າຫາກບໍ່ໄດ້ຮັບການຄຸ້ມຄອງ ແລະ ປົກປັກຮັກສາກໍ່ຈະກ້າວໄປສູ່ການ ສູນພັນໃນອະນາຄົດ;

17. **ສັດນ້ຳ ແລະ ສັດປ່າປະເພດທົ່ວໄປ**: ໝາຍເຖິງ ສັດນ້ຳ ແລະ ສັດປ່າທີ່ໄດ້ກຳນົດໄວ້ໃນບັນຊີ 3 ຊຶ່ງບໍ່ໄດ້ ຈັດເຂົ້າໃນສັດນ້ຳ ແລະ ສັດປ່າປະເພດຫວງຫ້າມ ແລະ ປະເພດຄຸ້ມຄອງ;

18. **ການນຳໃຊ້ເພື່ອສາທາລະນະປະໂຫຍດ**: ໝາຍເຖິງການນຳເອົາສັດນ້ຳ ແລະ ສັດປ່າມາຮັບຜົນປະໂຫຍ ດສ່ວນລວມເຊັ່ນ: ການທ່ອງທ່ຽວ, ສວນສັດ, ການກິລາ, ລະຄອນສັດ, ຫໍພິພິທະພັນ ແລະ ອື່ນໆ, ແຕ່ຕ້ອງປະຕິບັດຕາມກົດໝາຍ, ຮັບປະກັນຄວາມຍືນຍົງ, ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ;

19. **ການນຳໃຊ້ຕາມປະເພນີ**: ໝາຍເຖິງການນຳເອົາສັດນ້ຳ ແລະ ສັດປ່າມານຳໃຊ້ເພື່ອຄວາມຈຳເປັນທາງ ດ້ານວັດທະນະທຳ ຫຼື ຄວາມເຊື່ອຖືເຊັ່ນ: ການປ່ອຍນົກ, ປ່ອຍເຕົ່າ, ປ່ອຍປາ ແລະ ອື່ນໆ;

20. **ເຄື່ອງມືຫາກິນແບບພື້ນບ້ານ**: ໝາຍເຖິງເຄື່ອງມືທີ່ອະນຸຍາດໃຫ້ນຳເຂົ້າໃນພື້ນທີ່ເຂດຊຸດເຊີຍຊີວະນາໆ ພັນນ້ຳຈອນ-ນ້ຳຊັ້ງ ເຊັ່ນ: ພ້າ, ມີດ, ຂວານ, ສຽມ, ກະທົບ, ກະຕ່ຳ, ກະບອກ, ໜ້າເກັກ ແລະ ອື່ນໆ;

21. **ການນຳໃຊ້ໄມ້ ໃຊ້ສອຍສຳລັບຄອບຄົວ**: ໝາຍເຖິງໄມ້ທີ່ນຳໃຊ້ເພື່ອປຸກສ້າງ, ສ້ອມແປງເຮືອນ, ປຸກ ສ້າງຄອກສັດ, ເຮັດຫລັກຮົ້ວ, ໄມ້ຟືນ ແລະ ອື່ນໆ;

22. **ເຄື່ອງມືຫາກິນທີ່ມີລັກສະນະດັບສູນ**: ໝາຍເຖິງເຄື່ອງມືທີ່ບໍ່ອະນຸຍາດໃຫ້ນຳເຂົ້າໃນພື້ນທີ່ເຂດຊຸດເຊີຍ ຊີວະນາໆພັນນ້ຳຈອນ-ນ້ຳຊັ້ງ ເຊັ່ນ: ປືນທຸກຊະນິດ, ລະເບີດ, ທາດລະເບີດ, ທາດເບື່ອ ຫຼື ທາດພິດ,

ໝໍ້ຊອດ, ໝໍ້ດູດ, ແຮ້ວທຸກປະເພດ, ກັບດັກ, ຫ່າວປືນ, ຫ່າວແຫຼມ ແລະ ອື່ນໆ;

23. ຜະລິດຕະພັນປ່າໄມ້: ໝາຍເຖິງເຄື່ອງປ່າຂອງດົງປະເພດຕ່າງໆ ທີ່ເກີດຂຶ້ນຢູ່ຕາມທຳມະຊາດເຊິ່ງອາດຈະເປັນ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດຫຼືແກ່ນ, ເປືອກ, ນ້ຳມັນ, ຢາງໄມ້, ເຫັດ, ນ້ຳເຜິ້ງ ແລະ ອື່ນໆ.

**ມາດຕາ 4 : ນະໂຍບາຍຂອງລັດກ່ຽວກັບລະບຽບການຄຸ້ມຄອງເຂດຊຸ່ມເຊື່ອຍຊີວະນາໆພັນ**

ລັດຖືເອົາ ສັດນ້ຳ, ສັດປ່າ, ເຄື່ອງປ່າຂອງດົງ ແລະ ອື່ນໆ ທີ່ເກີດຂຶ້ນຢູ່ຕາມທຳມະຊາດໃຫ້ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ເຊິ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບກັນໃນທົ່ວແຂວງ.

ລັດສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນເຫື່ອແຮງ, ທຶນຮອນ, ວິຊາການ ແລະ ເຕັກໂນໂລຊີເຂົ້າໃນການອະນຸລັກປົກປັກຮັກສາຊີວະນາໆພັນແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານເສດຖະກິດ ແລະ ສັງຄົມ, ສິ່ງແວດລ້ອມ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ.

**ມາດຕາ 5: ຫຼັກການກ່ຽວກັບລະບຽບການຄຸ້ມຄອງເຂດຊຸ່ມເຊື່ອຍຊີວະນາໆພັນ**

ຫຼັກການກ່ຽວກັບລະບຽບການຄຸ້ມຄອງເຂດຊຸ່ມເຊື່ອຍຊີວະນາໆພັນນ້ຳຈອນ-ນ້ຳຊົ່ງ ມີຫຼັກການພື້ນຖານດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍຂອງລັດ ແລະ ລະບຽບການອື່ນໆ;
2. ສອດຄ່ອງກັບວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດສັງຄົມຂອງແຂວງໃນແຕ່ລະໄລຍະ;
3. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
4. ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ມີສ່ວນຮ່ວມຂອງຊຸມຊົນ ຢ່າງກວ້າງຂວາງ.

**ມາດຕາ 6: ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະຢູ່ໃນພື້ນທີ່ທີ່ໄດ້ກຳນົດເປັນເຂດຊຸ່ມເຊື່ອຍຊີວະນາໆພັນນ້ຳຈອນ-ນ້ຳຊົ່ງ ຂອງໂຄງການເຂື່ອນໄຟຟ້ານ້ຳງຽບ 1 ມີ 6 ບ້ານ ຄື: ບ້ານນາຕັນ, ບ້ານນາຍາງ ແລະ ບ້ານວັງພຽງ ຂອງເມືອງວຽງທອງ ແລະ ບ້ານສົບຂອນ, ບ້ານເມືອງຈ້ຳ ແລະ ບ້ານໂພນເມືອງ ຂອງເມືອງໄຊຈຳພອນ.

## ໝວດທີ 2
## ການກຳນົດຂອບເຂດ, ການຈັດແບ່ງ ແລະ ພັນທະ
## ໃນການປົກປັກຮັກສາເຂດຊຸ່ມເຊື່ອຍຊີວະນາໆພັນ

**ມາດຕາ 7: ການກຳນົດຂອບເຂດຊຸ່ມເຊື່ອຍຊີວະນາໆພັນ**

ການກຳນົດຂອບເຂດຊຸ່ມເຊື່ອຍຊີວະນາໆພັນນ້ຳຈອນ-ນ້ຳຊົ່ງ ແມ່ນນອນຢູ່ໃນພື້ນທີ່ປ່າປ້ອງກັນແຫ່ງຊາດນ້ຳມ່ອນ-ນ້ຳຍ້ອງ ເມືອງວຽງທອງ ແລະ ເມືອງໄຊຈຳພອນ, ເຂດຍອດນ້ຳຈອນ-ນ້ຳຊົ່ງ ເປັນເຂດຍອດນ້ຳທີ່ຫຼໍ່ລ້ຽງສາຍນ້ຳຍ້ອງ ແລະ ສາຍນ້ຳມ່ອນ ມີເນື້ອທີ່ 77.910 ເຮັກຕາ ຊຶ່ງມີເຂດແດນດັ່ງນີ້:

ທິດເໜືອຕິດກັບຊາຍແດນລາວ-ຫວຽດນາມ ສວນອຸທິຍານແຫ່ງຊາດພູມັດ, ໄລຍະທາງ 79 ກິໂລແມັດ, ເສັ້ນແວງ ທີ 104˚55'4", ເສັ້ນຂະໜານ ທີ 19˚2'8".

ທິດໃຕ້ຕິດກັບບ້ານ ນາຕັນ, ເມືອງວຽງທອງລຽບຕາມຫ້ວຍນໍ້າຕັນລົງຈົນເຖິງປາກນໍ້າຕັນຕົກໃສ່ສາຍນໍ້າຈໍາ ບ້ານສົບຂອນ, ເມືອງໄຊຈໍາພອນ, ໄລຍະທາງ 36 ກິໂລແມັດ, ເສັ້ນແວງ ທີ 104˚33'13", ເສັ້ນຂະໜານທີ 18˚39' 13".

ທິດຕາເວັນອອກຕິດກັບ ປາກນໍ້າຕັນເລາະລຽບຂຶ້ນຕາມສາຍນໍ້າຈໍາບ້ານສົບຂອນ ຜ່ານບ້ານເມືອງຈໍາ, ບ້ານ ໂພນເມືອງ ເມືອງໄຊຈໍາພອນຮອດຍອດນໍ້າຈໍາເຖິງຊາຍແດນລາວ-ຫວຽດນາມໄລຍະທາງ 35 ກິໂລແມັດ,ເສັ້ນແວງ ທີ 104˚55'4", ເສັ້ນຂະໜານ ທີ 18˚39' 12".

ທິດຕາເວັນຕົກຕິດກັບບ້ານ ນາຕັນລຽບຕາມເສັ້ນທາງໄປບ້ານນາຍາງ, ບ້ານວັງພຽງ ບ່ອນປາກນໍ້າຊັ່ງຕົກໃສ່ ນໍ້າຈອນ ລຽບຂຶ້ນຕາມສາຍນໍ້າຊັ່ງຮອດຍອດນໍ້າຊັ່ງເຖິງຊາຍແດນລາວ-ຫວຽດນາມ, ໄລຍະທາງ 70 ກິໂລແມັດ, ເສັ້ນແວງ ທີ 104˚24'44", ເສັ້ນຂະໜານ ທີ 18˚40' 27".

**ມາດຕາ 8: ການຈັດແບ່ງເຂດຊີວະນາໆພັນ**

ການຈັດແບ່ງເຂດຊີວະນາໆພັນນໍ້າຈອນ-ນໍ້າຊັ່ງ ໄດ້ແບ່ງອອກເປັນ 2 ເຂດດັ່ງນີ້:

1. **ເຂດຫວງຫ້າມເດັດຂາດ**: ແມ່ນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຄວາມຄ້ອຍຊັນສູງກວ່າ 35 ອົງສາ, ເຂດຕົ້ນກໍາເນີດຂອງສາຍນໍ້າ, ປ່າລຽບຊາຍແດນລະຫວ່າງປະເທດ, ປ່າລຽບແຄມນໍ້າ, ປ່າແຄມທາງ ແລະ ເຂດອື່ນໆ ທີ່ມີຄວາມສ່ຽງສູງຕໍ່ສິ່ງແວດລ້ອມ ໃນເຂດນີ້ຕ້ອງໄດ້ປົກປັກຮັກສາຢ່າງເຂັ້ມງວດ ແລະ ບໍ່ອະນຸຍາດໃຫ້ດໍາເນີນກິດຈະການຕ່າງໆເຊັ່ນ: ການຖາງປ່າເຮັດໄຮ່, ສວນ, ຕັດ, ທໍາລາຍ, ຈູດ ເຜົາ, ເຄື່ອນຍ້າຍຕົ້ນໄມ້, ຕັດໄມ້ຟືນ, ເອົາສັດເຂົ້າໄປລ້ຽງ, ຕັ້ງບ້ານເຮືອນ, ກໍ່ສ້າງກິດຈະການອື່ນໆ ນັບ ທັງການຂຸດຄົ້ນດິນ, ຫີນ, ບໍ່ແຮ່ ແລະ ເກັບກູ້ເຄື່ອງປ່າຂອງດົງ. ເຊິ່ງໄດ້ກໍານົດໄວ້ໃນແຜນຄຸ້ມຄອງເຂດ ຊີວະນາໆພັນນໍ້າຈອນ-ນໍ້າຊັ່ງ;
2. **ເຂດຄຸ້ມຄອງນໍາໃຊ້**: ແມ່ນເຂດປ່າໄມ້ທີ່ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ໂຄງສ້າງຂອງປ່າໄມ້ ໃນ ເຂດນີ້ຕ້ອງໄດ້ປົກປັກຮັກສາຄືກັບເຂດຫວງຫ້າມເດັດຂາດ ແຕ່ອະນຸຍາດໃຫ້ປະຊາຊົນນໍາໃຊ້ໄມ້ ແລະ ຜະລິດຕະພົນປ່າໄມ້ຕາມແຜນຈັດສັນ ເຊັ່ນ: ນໍາໃຊ້ໄມ້ປະເພດຄຸ້ມຄອງ, ເກັບກູ້ເຄື່ອງປ່າຂອງດົງຕາມ ລະດູການ, ການຫາສັດນໍ້າ ແລະ ສັດປ່າ ປະເພດຄຸ້ມຄອງ ເພື່ອບໍລິໂພກໃນຄອບຄົວຕາມປະເພນີ.

   ສໍາລັບເຄື່ອງມືທີ່ອະນຸຍາດນໍາໃຊ້ເຂົ້າໃນການຫາກິນ ເຊັ່ນ: ໜ້າ, ກະທຸບ, ແຮ້ວນ້ອຍ, ກະຕໍ່າ, ກະບອກ, ພ້າ, ມີດ, ຂວານ, ສຽມ, ມອງ, ແຫ, ກະດຸ້ງ ແລະ ເຄື່ອງມືຫາກິນແບບພື້ນບ້ານອື່ນໆທີ່ບໍ່ມີ ລັກສະນະດັບສູນ.

**ມາດຕາ 9: ພັນທະໃນການປົກປັກຮັກສາເຂດຊີວະນາໆພັນ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ ແລະ ເອກະຊົນ, ລ້ວນແຕ່ມີພັນທະໃນການປົກປັກຮັກສາ ປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນໍ້າ, ສັດນໍ້າ ແລະ ສັດປ່າ ແລະ ສິ່ງແວດລ້ອມ ພ້ອມທັງ ປະກອບສ່ວນໃນການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ ໃນເຂດຊີວະນາໆພັນ.

## ໝວດທີ 3
## ການສຶກສາຄົ້ນຄວ້າ, ການນຳໃຊ້ຜະລິດຕະພົນປ່າໄມ້, ທີ່ດິນປ່າໄມ້, ການຟື້ນຟູປ່າໄມ້ ແລະ ພັດທະນາພື້ນຖານໂຄງລ່າງເຂດຊີດເຊີຍຊີວະນາງພັນ

**ມາດຕາ 10: ການສຶກສາຄົ້ນຄວ້າ**

ລັດອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດຳເນີນການສຶກສາ, ຄົ້ນຄວ້າ, ທົດລອງທາງດ້ານວິທະຍາສາດໃນພື້ນທີ່ ທີ່ດິນເຂດຊົດເຊີຍຊີວະນາງພັນ ເພື່ອຊອກຫາຮູບແບບ ແລະ ມາດຖານເຕັກນິກເຊັ່ນ: ການສຶກສາຮູບແບບຟື້ນຟູປ່າໄມ້, ການດູດຊັບທາດກາໂບນິກ, ການຈັດສັນແຫຼ່ງແກ່ນພັນພືດ, ຊະນິດພັນໄມ້ທຳມະຊາດ, ການຈັດສັນແຫຼ່ງນ້ຳ, ການສຶກສາສັດນ້ຳ ແລະ ສັດປ່າ ແລະ ອື່ນໆ ຕາມລະບຽບຫຼັກການ.

**ມາດຕາ 11: ການນຳໃຊ້ຜະລິດຕະພົນປ່າໄມ້**

ການນຳໃຊ້ຜະລິດຕະພົນປ່າໄມ້ໃນເຂດຊົດເຊີຍຊີວະນາງພັນຄື:

ເຂດຫວງຫ້າມເດັດຂາດ: ແມ່ນນຳໃຊ້ສະເພາະເພື່ອການສຶກສາຄົ້ນຄວ້າທາງວິທະຍາສາດເທົ່ານັ້ນ.

ເຂດຄຸ້ມຄອງນຳໃຊ້: ແມ່ນອະນຸຍາດໃຫ້ນຳໃຊ້ໄມ້ປະເພດຄຸ້ມຄອງ, ການເກັບກູ້ເຄື່ອງປ່າຂອງດົງ, ຕົ້ນໄມ້ ແລະ ພືດທີ່ເປັນຢາ ເພື່ອໃຊ້ສອຍພາຍໃນຄອບຄົວ ຕາມປະເພນີ ແຕ່ຕ້ອງປະຕິບັດຕາມແຜນຈັດສັນ, ຕາມລະບຽບກົດໝາຍກ່ຽວກັບປ່າໄມ້ ບໍ່ໃຫ້ມີຜົນກະທົບຕໍ່ໂຄງສ້າງຂອງປ່າໄມ້.

**ມາດຕາ 12: ການນຳໃຊ້ທີ່ດິນປ່າໄມ້**

ການນຳໃຊ້ທີ່ດິນປ່າໄມ້ໃນເຂດຊົດເຊີຍຊີວະນາງພັນຄື:

ເຂດຫວງຫ້າມເດັດຂາດ: ແມ່ນນຳໃຊ້ສະເພາະເພື່ອການສຶກສາ, ຄົ້ນຄວ້າ, ທົດລອງທາງດ້ານວິທະຍາສາດກ່ຽວກັບພັນພືດ, ພັນສັດນ້ຳ ແລະ ສັດປ່າ ແລະ ການທ່ອງທ່ຽວທຳມະຊາດ ຕາມເຂດທີ່ຈັດສັນໄວ້.

ເຂດຄຸ້ມຄອງນຳໃຊ້: ແມ່ນນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ, ທົດລອງທາງດ້ານວິທະຍາສາດກ່ຽວກັບພັນພືດ, ພັນສັດນ້ຳ ແລະ ສັດປ່າ, ການທ່ອງທ່ຽວທຳມະຊາດ, ການຜະລິດກະສິກຳຄົງທີ່, ການສ້າງພື້ນຖານໂຄງລ່າງເຊັ່ນ: ເສັ້ນທາງ, ຊົນລະປະທານ, ຕາຂ່າຍໄຟຟ້າ, ກິດຈະກຳປູກສ້າງຂອງລັດ ຕາມແຜນການຈັດສັນ ເພື່ອແນ່ໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ໃນເຂດດັ່ງກ່າວໃຫ້ດີຂຶ້ນ.

**ມາດຕາ 13: ການຟື້ນຟູປ່າໄມ້ ແລະ ການພັດທະນາພື້ນຖານໂຄງລ່າງໃນເຂດຊົດເຊີຍຊີວະນາງພັນ**

ການຟື້ນຟູປ່າໄມ້ໃນເຂດຊົດເຊີຍຊີວະນາງພັນ ແມ່ນການບູລະນະໃຫ້ປ່າໄມ້ມີຄວາມອຸດົມສົມບູນຂຶ້ນເຊັ່ນ: ປ່າຊຸດໂຊມ, ປ່າເຫຼົ່າ, ພື້ນທີ່ປ່າປອກໂຫຼ້ນດ້ວຍການຟື້ນຟູປ່າແບບທຳມະຊາດ, ປູກໄມ້ເສີມໂດຍນຳໃຊ້ຊະນິດພັນໄມ້ພື້ນເມືອງ ຫຼື ພັນໄມ້ທ້ອງຖິ່ນລວມທັງເຄື່ອງປ່າຂອງດົງດ້ວຍການນຳໃຊ້ມາດຕະຖານທາງດ້ານເຕັກນິກ ແລະ ວິທະຍາສາດທີ່ເໝາະສົມ ເພື່ອເຮັດໃຫ້ສະພາບປ່າໄມ້ ໃນເຂດຊົດເຊີຍຊີວະນາງພັນມີຄຸນຄ່າສູງ ແລະ ສົມດູນກັບລະບົບນິເວດປ່າໄມ້.

ກໍລະນີມີແຜນພັດທະນາພື້ນຖານໂຄງລ່າງຂອງລັດ ນອກຈາກທີ່ກຳນົດໄວ້ໃນ ມາດຕາ 12 ວັກ 2 ທີ່ມີຜົນປະໂຫຍດຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ຂອງແຂວງ, ຂອງຊາດ ຈະຕ້ອງມີການປຶກສາຫາລືກັບຄະນະຊີ້

ນຳເພື່ອຄົ້ນຄວ້າຫາເຂດຊຸ່ມເຊື່ອອື່ນປ່ຽນແທນ.

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 14: ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ-ເອກະຊົນທັງພາຍໃນ ແລະ ຕ່າງປະເທດມີພຶດຕິກຳດັ່ງນີ້:

1. ດຳເນີນກິດຈະກຳໃດໆ ໃນເຂດຫວງຫ້າມເດັດຂາດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດຳເນີນກິດຈະກຳທີ່ເປັນການບຸກລຸກ ແລະ ທຳລາຍທີ່ດິນໃນເຂດຄຸ້ມຄອງນຳໃຊ້ ຂອງເຂດຊຸ່ມເຊື່ອຊີວະນາໆພັນ ເຊັ່ນ: ການຈັບຈອງທີ່ດິນ, ບຸກເບີກເນື້ອທີ່ນາ, ຖາງປ່າເຮັດໄຮ່, ການສ້າງຄັງລ້ຽງສັດ ແລະ ນຳໃຊ້ສານເຄມີທຸກຊະນິດ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
3. ຖິ້ມສິ່ງເປິະເປື້ອນ, ສິ່ງເສດເຫຼືອ ແລະ ຂີ້ເຫຍື້ອໃນເຂດບໍລິເວນປ່າໄມ້, ເຂດແຄມນ້ຳ, ແມ່ນ້ຳ,ລຳເຊ, ຕະຄອງຮ່ອງນ້ຳ, ຫ້ວຍ, ໜອງ, ບຶງ ແລະ ທີ່ດິນບໍລິເວນນ້ຳທີ່ເປັນການທຳລາຍແຫຼ່ງນ້ຳ ແລະຄຸນນະພາບນ້ຳໃນເຂດຊຸ່ມເຊື່ອຊີວະນາໆພັນ;
4. ຂະຫຍາຍພື້ນທີ່ທຳການຜະລິດ ທີ່ມີຢູ່ແລ້ວໃນເຂດຊຸ່ມເຊື່ອຊີວະນາໆພັນອອກຕື່ມຢ່າງເດັດຂາດ ຍົກເວັ້ນແຕ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
5. ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍເຂດແດນຂອງເຂດຊຸ່ມເຊື່ອຊີວະນາໆພັນນ້ຳຈອນ-ນ້ຳຊຸ່ງ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 15: ຂໍ້ຫ້າມການນຳໃຊ້ຊັບພະຍາກອນທຳມະຊາດ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳດັ່ງນີ້:

1. ຂຸດຄົ້ນໄມ້ທຸກຊະນິດ ນັບທັງໄມ້ຢືນຕົ້ນ, ໄມ້ນອນຂອນຕາຍ, ການຂຸດຄົ້ນແຮ່ທາດ, ສ້າງອ່າງເກັບນ້ຳ, ສ້າງເສັ້ນທາງ ແລະ ອື່ນໆ ທີ່ເປັນການທຳລາຍຊັບພະຍາກອນປ່າໄມ້ ແລະ ເຄື່ອງປ່າຂອງດົງທຸກຊະນິດ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
2. ລ່າ, ຊື້-ຂາຍ ສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມທຸກຊະນິດ;
3. ຂຸດ, ເຈາະ, ດູດຫີນ, ດູດຊາຍ, ປ່ຽນແປງແລວນ້ຳ, ການປັບແປງໜ້າດິນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 16: ຂໍ້ຫ້າມສຳລັບການນຳໃຊ້ເຄື່ອງມືຫາກິນ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳດັ່ງນີ້:

1. ນຳໃຊ້ເຄື່ອງມືຫາກິນແບບດັບສູນເຊັ່ນ: ປືນທຸກຊະນິດ, ລະເບີດ, ທາດເບື່ອ, ແຮ້ວສາຍລວດ, ກັບດັກ,

ຫ່າວ, ກະຕ່າ, ໝໍ້ຊ໊ອດໄຟຟ້າ, ໜາພານລ່າສັດປ່າ ແລະ ອື່ນໆ ເພື່ອລ່າ ສັດນ້ຳ ແລະ ສັດປ່າ ທຸກຊະນິດ;

2. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 17: ຂໍ້ຫ້າມສຳລັບຄະນະກຳມະການຄຸ້ມຄອງເຂດຊຸ່ມເຊື່ອຊີວະນາໆພັນນ້ຳຈອນ-ນ້ຳຊັ່ງ**

ຫ້າມຄະນະກຳມະການຄຸ້ມຄອງເຂດຊຸ່ມເຊື່ອຊີວະນາໆພັນ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ຮຽກເອົາ, ຮ້ອງເອົາ, ທວງເອົາ, ຮັບເອົາສິນບົນເພື່ອຜົນປະໂຫຍດສ່ວນຕົວ ແລະ ພັກພວກ;
2. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງປະຊາຊົນ;
3. ເມີນເສີຍ, ປະລະໜ້າທີ່ຄວາມຮັບຜິດຊອບ ຕໍ່ວຽກງານ ທີ່ການຈັດຕັ້ງມອບໝາຍໃຫ້;
4. ປອມແປງເອກະສານເຊັ່ນ: ລາຍເຊັນ ແລະ ຕາປະທັບ ຂອງຄະນະກຳມະການຄຸ້ມຄອງເຂດຊຸ່ມເຊື່ອຊີວະນາໆພັນ;
5. ເປັນທີ່ປຶກສາ, ດຳເນີນ, ເຂົ້າຮ່ວມ ຫຼື ເປັນຫຸ້ນສ່ວນໃນການດຳເນີນທຸລະກິດກ່ຽວກັບການຂຸດຄົ້ນ, ຊື້-ຂາຍໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ແລະ ຜະລິດຕະພັນປ່າໄມ້;
6. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ສວຍໃຊ້ເຄື່ອງຈັກຂຸດຄົ້ນໄມ້, ພາຫະນະລາກແກ່ໄມ້ ແລະ ເຄື່ອງມືລ່າເນື້ອທຸກຊະນິດ ເພື່ອຜົນປະໂຫຍດສ່ວນຕົວ;
8. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 5

## ຄະນະກຳມະການຄຸ້ມຄອງ ແລະ ອົງການກວດກາເຂດຊຸ່ມເຊື່ອຊີວະນາໆພັນ

**ມາດຕາ 18: ຄະນະກຳມະການຄຸ້ມຄອງເຂດຊຸ່ມເຊື່ອຊີວະນາໆພັນນ້ຳຈອນ-ນ້ຳຊັ່ງ**

ອົງການປົກຄອງແຂວງເປັນຜູ້ຄຸ້ມຄອງກ່ຽວກັບເຂດຊຸ່ມເຊື່ອຊີວະນາໆພັນນ້ຳຈອນ-ນ້ຳຊັ່ງ ຢ່າງລວມສູນເປັນເອກະພາບ ໂດຍມອບຄວາມຮັບຜິດຊອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງໃນການປະສານສົມທົບກັບພະແນກການທີ່ກ່ຽວຂ້ອງ.

ຄະນະຄຸ້ມຄອງເຂດຊຸ່ມເຊື່ອຊີວະນາໆພັນນ້ຳຈອນ-ນ້ຳຊັ່ງ ປະກອບມີ 3 ຄະນະ ຄື:

1. ຄະນະຊີ້ນຳຂັ້ນແຂວງປະກອບມີ:
   - ທ່ານ ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານເສດຖະກິດ ເປັນປະທານ;
   - ທ່ານ ຫົວໜ້າ ຫຼື ຮອງພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຮອງ;
   - ທ່ານ ຮອງຫົວໜ້າການທະຫານ ກອງບັນຊາການ ປກຊ ເປັນຄະນະ;
   - ທ່ານ ຮອງພະແນກການກ່ຽວຂ້ອງຈຳນວນໜຶ່ງທີ່ຈຳເປັນ ເປັນຄະນະ;
   - ທ່ານ ຮອງເຈົ້າເມືອງ ເມືອງວຽງທອງ ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ;
   - ທ່ານ ຮອງເຈົ້າເມືອງ ເມືອງໄຊຈຳພອນ ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ.

2. ຄະນະກອງເລຂາປະກອບມີດັ່ງນີ້:

- ທ່ານ ຮອງຫົວໜ້າຂະແໜງປ່າໄມ້ ຫລື ວິຊາການປ່າໄມ້ຊໍານານງານ ເປັນຫົວໜ້າ;
- ທ່ານ ຫົວໜ້າ ຫຼື ຮອງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງໄຊຈໍາພອນ ເປັນຮອງ;
- ທ່ານ ຫົວໜ້າ ຫຼື ຮອງຫົວໜ້າຫ້ອງການກະສິກໍາ ແລະ ປ່າໄມ້ເມືອງວຽງທອງ ເປັນຮອງ;
- ທ່ານ ວິຊາການຈໍານວນໜຶ່ງ ເປັນຜູ້ຊ່ວຍວຽກ.

3. ຄະນະກໍາມະການຄຸ້ມຄອງຂັ້ນບ້ານ

- ທ່ານ ຮອງນາຍບ້ານ ບ້ານວັງພຽງ;
- ທ່ານ ຮອງນາຍບ້ານ ບ້ານນາຍາງ;
- ທ່ານ ຮອງນາຍບ້ານ ບ້ານນາຕົນ;
- ທ່ານ ຮອງນາຍບ້ານ ບ້ານສີບຂອນ;
- ທ່ານ ຮອງນາຍບ້ານ ບ້ານເມືອງຈໍາ;
- ທ່ານ ຮອງນາຍບ້ານ ບ້ານໂພນເມືອງ.

ສໍາລັບຄະນະກໍາມະການຄຸ້ມຄອງຂັ້ນບ້ານຈະມີຂໍ້ຕົກລົງຈາກຄະນະຊີ້ນໍາຂັ້ນແຂວງ.

ນອກນີ້ຍັງມີ ອາສາສະໝັກປ່າໄມ້ບ້ານຈໍານວນໜຶ່ງໃນການຊ່ວຍວຽກກວດກາລາດຕະເວນ, ວຽກຟື້ນຟູປ່າ, ວຽກງານສໍາຫລວດ, ວຽກວາງແຜນນໍາໃຊ້ທີ່ດິນ, ວຽກພັດທະນາບ້ານ.

ສໍາລັບງົບປະມານທີ່ນໍາໃຊ້ເຂົ້າໃນວຽກງານແມ່ນ ບໍລິສັດໄຟຟ້ານໍ້າງຽບ 1 ເປັນຜູ້ສະໜອງງົບປະມານ ແລະ ນໍາໃຊ້ງົບປະມານຕາມແຜນງົບປະມານຂອງໂຄງການສະເພາະ.

**ມາດຕາ 19: ສິດ ແລະ ໜ້າທີ່ ຂອງຄະນະຊີ້ນໍາຂັ້ນແຂວງ**

ຄະນະຊີ້ນໍາຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ມີສິດຖອນ ແລະ ແຕ່ງຕັ້ງວິຊາການຂອງກອງເລຂາ, ຄະນະກໍາມະການຄຸ້ມຄອງຂັ້ນບ້ານ ໃນຂະແໜງຂອງຕົນທີ່ເຫັນວ່າມີຄວາມຈໍາເປັນ ແລະ ມີຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ;
2. ຊີ້ນໍາ-ນໍາພາການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ນິຕິກໍາຕ່າງໆທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງ, ຟື້ນຟູ, ບູລະນະປ່າໄມ້, ຊີວະນາໆພັນ, ສັດນໍ້າ ແລະ ສັດປ່າທຸກໆຊະນິດ ໃນເຂດຊົດເຊີຍຊີວະນາໆພັນໃຫ້ມີຄວາມຍືນຍົງ;
3. ໃຫ້ຄໍາແນະນໍາ ປຶກສາດ້ານນະໂຍບາຍ, ຍຸດທະສາດໃນການຄຸ້ມຄອງ, ປົກປັກຮັກສາອະນຸລັກທໍາມະຊາດ, ຫ້ວຍນໍ້າ, ຊີວະນາໆພັນສັດນໍ້າ ແລະ ສັດປ່າ ທຸກປະເພດ;
4. ໃຫ້ການສະໜັບສະໜູນອໍານວຍຄວາມສະດວກ ແລະ ຊີ້ນໍາກອງເລຂາ, ຂະແໜງການ, ໜ່ວຍງານດ້ານວິຊາການຕ່າງໆທີ່ກ່ຽວຂ້ອງໃນການຄຸ້ມຄອງປົກປັກຮັກສາອະນຸລັກເຂດຊົດເຊີຍຊີວະນາໆພັນ ເພື່ອເຮັດໃຫ້ກິດຈະກໍາຕ່າງໆໄດ້ຖືກຈັດຕັ້ງປະຕິບັດຕາມແຜນທີ່ໄດ້ກໍານົດໄວ້;
5. ຕິດຕາມກວດກາ ແລະ ປະເມີນຜົນຄວາມຄືບໜ້າໃນການຈັດຕັ້ງປະຕິບັດດ້ານວິຊາການໂດຍສະເພາະແມ່ນກິດຈະກໍາທີ່ໄດ້ດໍາເນີນຕາມແຜນຄຸ້ມຄອງເຂດຊົດເຊີຍຊີວະນາໆພັນເພື່ອລາຍງານໃຫ້ການນໍາຂັ້ນເທິງຊາບ;

6. ໃຫ້ຄໍາເຫັນ ເພື່ອປັບປຸງ ແລະ ອະນຸມັດແຜນປະຈໍາປີ ເພື່ອຈັດຕັ້ງປະຕິບັດກິດຈະກໍາຕ່າງໆ;
7. ລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດຊຶດເຊີຍຊີວະນາໆພັນ ໃຫ້ລັດຖະບານ, ຊີ້ນໍາ ກອງເລຂາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມ ລະບຽບກົດໝາຍ, ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານແຫ່ງ ສປປ ລາວ;
8. ຮັບຮອງ ແລະ ອະນຸມັດແຜນຄຸ້ມຄອງເຂດຊຶດເຊີຍຊີວະນາໆພັນ;
9. ເຂົ້າຮ່ວມກອງປະຊຸມປະຈໍາໄຕມາດ, ປະຈໍາ 6 ເດືອນ, ປະຈໍາປີ ແລະ ກອງປະຊຸມຕ່າງໆທີ່ກ່ຽວຂ້ອງ ກັບເຂດຊຶດເຊີຍຊີວະນາໆພັນ.

**ມາດຕາ 20: ສິດ ແລະ ໜ້າທີ່ຂອງຄະນະກອງເລຂາ**

ຄະນະກອງເລຂາມີ ສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ເປັນເສນາທິການທາງດ້ານວິຊາການໃຫ້ຄະນະຊີ້ນໍາຂັ້ນແຂວງ ແລະ ເປັນເຈົ້າການໃນການຈັດຕັ້ງ ປະຕິບັດວຽກງານຄຸ້ມຄອງເຂດຊຶດເຊີຍຊີວະນາໆພັນ;
2. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາຕ່າງໆທີ່ກ່ຽວຂ້ອງ;
3. ປຶກສາຫາລື ແລະ ຂໍຄໍາເຫັນກັບຄະນະຊີ້ນໍາຂັ້ນແຂວງ, ບໍລິສັດໄຟຟ້ານໍ້າງຽບ 1 ໃນການສ້າງແຜນ ຫຼື ປັບປຸງແຜນດໍາເນີນງານ, ແຜນງົບປະມານໃນການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ເພື່ອໃຫ້ຄະນະຊີ້ນໍາ ຂັ້ນແຂວງພິຈາລະນາຮັບຮອງຕາມແຜນປະຈໍາປີ;
4. ປະສານງານ ແລະ ຈັດຕັ້ງປະຕິບັດກິດຈະກໍາໃຫ້ສອດຄ່ອງກັບແຜນງານ, ແຜນການ ແລະ ຕາມການຊີ້ ນໍາຈາກຄະນະຊີ້ນໍາຂັ້ນແຂວງ;
5. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ສະຫລຸບ ລາຍງານກອງປະຊຸມປະຈໍາເດືອນ, ປະຈໍາໄຕມາດ, ປະຈໍາ 6 ເດືອນ, ປະຈໍາປີ ແລະ ກອງປະຊຸມຕ່າງໆທີ່ກ່ຽວຂ້ອງກັບເຂດຊຶດເຊີຍຊີວະນາໆພັນ;
6. ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບນໍາໃຊ້ງົບປະມານເຂົ້າໃນວຽກງານ ຢ່າງມີປະສິດທິຜົນ;
7. ສົ່ງເສີມ, ຊຸກຍູ້ ແລະ ອໍານວຍຄວາມສະດວກໃຫ້ບັນດາກິດຈະກໍາທີ່ເຫັນວ່າມີຜົນປະໂຫຍດໃຫ້ແກ່ການ ຄຸ້ມຄອງເຂດຊຶດເຊີຍຊີວະນາໆພັນ;
8. ເກັບກໍາຂໍ້ມູນ, ຄົ້ນຄວ້າ, ແກ້ໄຂບັນຫາ ແລະ ນໍາສະເໜີ ບັນຫາທີ່ມີຄວາມຫຍຸ້ງຍາກບໍ່ສາມາດແກ້ໄຂໄດ້ ຕໍ່ຄະນະຊີ້ນໍາຂັ້ນແຂວງ;
9. ຈັດຕັ້ງປະຕິບັດວຽກງານອື່ນໆຕາມທີ່ໄດ້ຮັບມອບໝາຍຂອງຄະນະຊີ້ນໍາຂັ້ນແຂວງ.

**ມາດຕາ 21: ສິດ ແລະ ໜ້າທີ່ຂອງຄະນະກໍາມະການຂັ້ນບ້ານ**

ຄະນະກໍາມະການຂັ້ນບ້ານ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ເຂົ້າຮ່ວມ ແລະ ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານຂອງກອງເລຂາ;
2. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາຕ່າງໆທີ່ກ່ຽວຂ້ອງ ສຶກສາອົບຮົມປະຊາຊົນພາຍໃນ ບ້ານຂອງຕົນໃຫ້ມີຄວາມເຂົ້າໃຈ ແລະ ເຂົ້າຮ່ວມໃນການເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກໍາຕ່າງໆ;
3. ເປັນເຈົ້າການໃນການເກັບກໍາສະພາບ ຫຼື ບັນຫາຕ່າງໆ ເພື່ອລາຍງານໃຫ້ຄະນະກອງເລຂາເປັນປະຈໍາ;

4. ເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບວຽກງານຂອງໂຄງການຄຸ້ມຄອງເຂດຊີດເຊີຍຊີວະນາໆພັນຕາມການກຳນົດ/ການຮຽນເຊີນ ຂອງກອງເລຂາຄຸ້ມຄອງເຂດຊີດເຊີຍຊີວະນາໆພັນ.

ມາດຕາ 22: ອົງການກວດກາເຂດຊີດເຊີຍຊີວະນາໆພັນ

ການກວດກາເຂດຊີດເຊີຍຊີວະນາໆພັນແມ່ນ ການຕິດຕາມການເຄື່ອນໄຫວຊຸກຍູ້ການຄຸ້ມຄອງ, ປົກປັກຮັກສາຊີວະນາໆພັນ, ອົງການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແນໃສ່ເຮັດໃຫ້ລະບົບນິເວດວິທະຍາມີຄວາມຍືນຍົງ.

ອົງການກວດກາເຂດຊີດເຊີຍຊີວະນາໆພັນປະກອບມີ 2 ພາກສ່ວນຄື: ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

1. ອົງການກວດກາພາຍໃນປະກອບມີ: ຄະນະກຳມະການຊີ້ນຳຂັ້ນແຂວງ, ພະແນກກະສິກຳ ແລະ ປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ປ່າໄມ້ປະຈຳບ້ານ;
2. ອົງການກວດກາພາຍນອກປະກອບມີ: ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ພະແນກກວດກາລັດ ແລະ ອົງການຈັດຕັ້ງມະຫາຊົນ ຕະຫຼອດຮອດປະຊາຊົນ.

ມາດຕາ 23: ເນື້ອໃນ ແລະ ຮູບການ ການກວດກາການຄຸ້ມຄອງເຂດຊີດເຊີຍຊີວະນາໆພັນ

ເນື້ອໃນການກວດກາແມ່ນ: ກວດກາການຈັດຕັ້ງປະຕິບັດວຽກງານຂອງຄະນະຊີ້ນຳຂັ້ນແຂວງ, ກອງເລຂາ, ຄະນະກຳມະການຄຸ້ມຄອງຂັ້ນບ້ານ ເຂດຊີດເຊີຍຊີວະນາໆພັນ.

ຮູບການ ການກວດກາມີ 3 ຮູບການຄື:

1. ກວດກາປົກກະຕິ: ແມ່ນການກວດກາຕາມແຜນການທີ່ວາງໄວ້ແຕ່ລະໄລຍະ;
2. ກວດກາແບບແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນການກວດກາທີ່ມີການແຈ້ງໃຫ້ຮູ້ລ່ວງໜ້າເພື່ອໃຫ້ເປົ້າໝາຍທີ່ຖືກກວດກາຮັບຮູ້ກ່ອນຢ່າງເປັນລາຍລັກອັກສອນ;
3. ກວດກາແບບບໍ່ແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນການກວດກາຕາມແຫຼ່ງຂ່າວຈາກພົນລະເມືອງດີ ຫຼື ກວດກາແບບກະທັນຫັນຕາມເປົ້າໝາຍສະເພາະ.

## ໝວດທີ 6

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 24: ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ເປັນຕົ້ນໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້, ທີ່ດິນປ່າໄມ້, ບຸກຟື້ນຟູ ແລະ ປ້ອງກັນການທຳລາຍຊັບພະຍາກອນທຳມະຊາດ ຢູ່ໃນເຂດຊີດເຊີຍຊີວະນາໆພັນຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 25: ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກກ່າວເຕືອນ ສຶກສາອົບຮົມ, ລົງວິໄນ, ຖືກປັບໃໝ ແລະ ດຳເນີນຄະດີຕາມລະບຽບກົດໝາຍແຫ່ງ ສປປ ລາວ.

**ມາດຕາ 26: ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າຕໍ່າກວ່າ 200.000 ກີບ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບ ຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ແລະ ສົ່ງຊັບສິນ ຫຼື ຂອງກາງ ທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນຄົບຖ້ວນກໍ່ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 27: ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ເຊິ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກຕິຕຽນ, ກ່າວເຕືອນຄວາມຜິດ; ກໍລະນີບໍ່ມີຄວາມຈິງໃຈລາຍງານ, ລົບຫຼີກຈາກຄວາມຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ, ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ຕໍ່າກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 28: ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝດັ່ງນີ້:

ກໍ່ຄວາມເສຍຫາຍທີ່ມີມູນຄາແຕ່ 200.000-3.000.000 ກີບ ກໍຈະຖືກປັບໃໝເທົ່າຕົວຂອງມູນຄ່າຄວາມເສຍຫາຍຂອງສັດນ້ຳ ແລະ ສັດປ່າ ໃນກໍລະນີທີ່ມີການລະເມີດເປັນຄັ້ງທີ່ສອງ ຫຼື ເປັນອາຈິນ ຈະຖືກປັບໃໝສາມເທົ່າທີ່າຕົວຂອງມູນຄ່າຄວາມເສຍຫາຍ ຂອງສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ, ສອງເທົ່າຕົວຂອງສັດປ່າປະເພດຄຸ້ມຄອງ ແລະ ໜຶ່ງເທົ່າຕົວຂອງສັດປ່າປະເພດທົ່ວໄປ ພ້ອມທັງຮິບເຄື່ອງມືທີ່ໃຊ້ເຂົ້າໃນການກະທຳຜິດ ແລະ ຊັບສິນທີ່ໄດ້ມາເປັນຂອງລັດ.

ກໍ່ຄວາມເສຍຫາຍທີ່ມີມູນຄ່າແຕ່ 1.000.000-5.000.000 ກີບ ຈະຖືກປັບໃໝໜຶ່ງເທົ່າຕົວຂອງມູນຄ່າຄວາມເສຍຫາຍຂອງປ່າໄມ້, ຜະລິດຕະພັນປ່າໄມ້ ລວມທັງຊັບພະຍາກອນປ່າໄມ້ ຕາມຄາລາຫ້ອງຕະຫຼາດ ໃນກໍລະນີ ທີ່ການລະເມີດ ເປັນຄັ້ງທີສອງ ຫຼື ເປັນອາຈິນ ກໍຈະຖືກປັບໃໝ ສອງເທົ່າຂອງມູນຄ່າຄວາມເສຍຫາຍຂອງປ່າໄມ້, ຜະລິດ ຕະພັນປ່າໄມ້ ລວມທັງຊັບພະຍາກອນປ່າໄມ້ ຕາມລາຄາຫ້ອງຕະຫຼາດ.

ສຳລັບການຄຸ້ມຄອງ ແລະ ນຳໃຊ້ເງິນທີ່ໄດ້ຈາກການປັບໃໝ ແມ່ນປະຕິບັດຕາມລະບຽບກົດໝາຍສະເພາະ.

**ມາດຕາ 29: ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງກໍ່ຄວາມເສຍຫາຍກ່ຽວກັບວຽກງານຄຸ້ມຄອງເຂດຊຸດເຊີຍຊີວະນາງພັນ ທີ່ເປັນຜົນປະໂຫຍດຂອງລັດ, ຄອບຄົວ ແລະ ບຸກຄົນອື່ນ ເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງ ແມ່ນຈະຕ້ອງໃຊ້ແທນຄ່າເສຍ

ຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ ແລະ ຊັບສິນທີ່ໄດ້ມາຈາກການກະທຳຜິດຈະຖືກຮິບເປັນຂອງລັດທັງໝົດ.

**ມາດຕາ 30: ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງເປັນການກະທຳໂດຍບໍ່ໄດ້ຮັບອະນຸຍາດ ແລະ ຜິດຕໍ່ລະບຽບກົດໝາຍ ທີ່ກໍ່ຄວາມເສຍຫາຍຕໍ່ວຽກງານການຄຸ້ມຄອງເຂດຊີດເຊີຍຊີວະນາໆພັນ ຈະຖືກດຳເນີນຄະດີອາຍາ ຕາມປະມວນກົດໝາຍອາຍາ.

**ມາດຕາ 31: ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍທີ່ໄດ້ກ່າວໄວ້ແລ້ວ ຜູ້ກະທຳຜິດຈະຖືກປະຕິບັດໂທດເພີ່ມໃນການຮິບຊັບ, ພາຫະນະອຸປະກອນ ທີ່ພົວພັນກັບການກະທຳຜິດມາເປັນຂອງລັດ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 32: ກາປະທັບ**

ກອງເລຂາເຂດຊີດເຊີຍຊີວະນາໆພັນ ນໍ້າຈວນ-ນໍ້າຊັ່ງ ຂອງໂຄງການເຂື່ອນໄຟຟ້ານໍ້າງຽບ 1 ມີກາປະທັບເປັນຂອງຕົນເອງ ເຊິ່ງນຳໃຊ້ຕາມ ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນ ໝວດທີ 5 ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 33: ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະຊີ້ນຳຂັ້ນແຂວງ, ຄະນະກອງເລຂາ, ຄະນະກຳມະການຂັ້ນບ້ານ, ທຸກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະຊາຊົນບັນດາເຜົ່າ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 34: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນເຈົ້າແຂວງລົງລາຍເຊັນ ເປັນຕົ້ນໄປ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການພາຍໃນ 15 ວັນ.

ເຈົ້າແຂວງບໍລິຄຳໄຊ

ປອ. ກອງແກ້ວ ໄຊສົງຄາມ